JDB
ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 1946 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 29 ກໍລະກົດ 2026

ແຈ້ງການ

ເຖິງ: ລູກຄ້າ ທະນາຄານຮ່ວມພັດທະນາ ມະຫາຊົນ ທີ່ເຄົາລົບ ແລະ ນັບຖື,

ເລື່ອງ: ການເຂົ້ານຳໃຊ້ ແອັບພລິເຄຊັນ JDB YES (Mobile Banking Web Application).

ທະນາຄານຮ່ວມພັດທະນາ ມະຫາຊົນ **(ທຄຮ ຫຼື JDB)** ຂໍຖືເປັນກຽດແຈ້ງມາຍັງ ລູກຄ້າທຸກທ່ານຊາບວ່າ: ປະຈຸບັນ ທຄຮ ໄດ້ດຳເນີນການປັບປຸງການເຂົ້ານຳໃຊ້ແອັບພລິເຄຊັນ JDB YES ແບບ Web application ເພື່ອໃຫ້ມີຄວາມທັນສະໄໝ, ໃຊ້ງານງ່າຍ, ປອດໄພ ແລະ ເພີ່ມຊ່ອງທາງການໃຫ້ບໍລິການສະດວກຍິ່ງຂຶ້ນ, ລູກຄ້າສາມາດເຂົ້ານຳໃຊ້ ແອັບພລິເຄຊັນ JDB YES Web Application **ເລີ່ມຕັ້ງແຕ່ວັນທີ 31 ກໍລະກົດ 2026 ເປັນຕົ້ນໄປ**, ໂດຍຜ່ານຊ່ອງທາງທີ່ ທຄຮ ກຳນົດ ດັ່ງນີ້:

1. ທ່ານສາມາດສະແກນລະຫັດຄິວອາ (QR Code) ທີ່ລະບຸໃນເອກະສານສະບັບນີ້ ເພື່ອຕິດຕັ້ງ ແລະ ເຂົ້ານຳໃຊ້ງານ ແອັບພລິເຄຊັນ JDB YES ແບບ Web Application;
2. ທ່ານສາມາດເຂົ້າໄປເບິ່ງການແນະນຳວິທີການຕິດຕັ້ງແອັບພລິເຄຊັນ JDB YES (Web App) ຜ່ານໜ່ວຍບໍລິການ ທີ່ອປະເທດ, Official Website, Facebook Page ແລະ TIKTOK Page ຂອງ ທຄຮ;

- ການນຳໃຊ້ແອັບພລິເຄຊັ້ນ JDB YES (Mobile Banking Web Application) ແມ່ນນຳໃຊ້ຜ່ານລະບົບປະຕິບັດການມືຖື iPhone IOS (Apple Store) ແລະ Android (Play store) ເປັນຫລັກ ນັບຕັ້ງແຕ່ອອກແຈ້ງການເປັນໄປ.

ໝາຍເຫດ: ຖ້າທ່ານຕ້ອງການຄຳແນະນຳເພີ່ມເຕີມ ຫຼື ພົບບັນຫາໃນການເຂົ້າໃຊ້ງານ, ສາມາດຕິດຕໍ່ຜ່ານໜ່ວຍບໍລິການ ທຄຮ ທີ່ອປະເທດໃກ້ບ້ານທ່ານ ຫຼື ສູນບໍລິການລູກຄ້າ ຜ່ານເບີໂທສາຍດ່ວນ **1499**.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ຂໍຂອບໃຈຢ່າງສູງ ລູກຄ້າທຸກທ່ານທີ່ໃຫ້ຄວາມເຊື່ອໝັ້ນການບໍລິການ ແລະ ໃຫ້ການສະໜັບສະໜູນ ຕະຫຼອດມາ.

ຜູ້ອຳນວຍການ

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public

ຄອນສະຫວັນ ວິຊາເທບ

ສະແກນລະຫັດຄິວອາ (QR) ນີ້ ເພື່ອຕິດຕັ້ງ ແລະ ນຳໃຊ້ JDB Yes (Web Application)